ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ສ້າງຂະບວນການເພື່ອ ຂໍານັບຮັບຕ້ອງວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ



ເພື່ອເຮັດໃຫ້ວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ ຄື (ວັນທີ່ 7 ຕຸລາ 1968 – 7 ຕຸລາ 2021) ໃຫ້ມີສີສັນ ບົນພື້ນຖານຮັກສາຄວາມເປັນລະບຽບຮຽບຮ້ອຍໃນໄລຍະປະຕິບັດມາດຕະການຄວບຄຸມການແຜ່ລະບາດຂອງ ພະຍາດ ໂຄວິດ-19 ພາຍໃນ ທຫລ ໃຫ້ມີປະສິດທິພາບ; ຄະນະນໍາ ທຫລ ຍາມໃດກໍ່ເຫັນໄດ້ເຖິງຄວາມສໍາຄັນ ກ່ຽວກັບຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງອົງການ ສະນັ້ນ, ຈຶ່ງໄດ້ຊີ້ນໍາໃຫ້ ຫ້ອງການ ທຫລ ຈັດຕັ້ງປະຕິບັດການສີດຢາຂ້າເຊື້ອຕ້ານໂຄວິດ-19 ແລະ ຢາຂ້າຍຸງ ຂຶ້ນ.

ການຈັດຕັ້ງສີດຢາຂ້າເຊື້ອຕ້ານໂຄວິດ-19 ແລະ ຢາຂ້າຍຸງ ໄດ້ດໍາເນີນການ ໃນຕອນແລງຂອງວັນທີ 6 ຕຸລາ 2021 ຢູ່ທີ່ສໍານັກງານໃຫ່ຍ, ທຫລ, ນະຄອນຫຼວງວຽງຈັນ ໃນນັ້ນ, ໄດ້ສີດຢາຂ້າເຊື້ອຕ້ານໂຄວິດ-19 ໃນບໍລິເວັນ ພາຍໃນ ແລະ ພາຍນອກສໍານັກງານ ໂດຍສະເພາະເຂດທີ່ມີການເຄື່ອນໄຫວຂອງພະນັກງານ ເພື່ອຮັບປະກັນວ່າແຕ່ ລະຂອບເຂດໃນ ທຫລ ມີຄວາມສະອາດ ປາດສະຈາກເຊື້ອພະຍາດຕ່າງໆໄດ້ຢ່າງສົມບູນ; ຫຼັງຈາກສໍາເລັດການສີດ ຢາຂ້າເຊື້ອຕ້ານໂຄວິດ-19 ແລ້ວ ກໍ່ສືບຕໍ່ສີດຢາຂ້າຍຸງ ເຊິ່ງການສີດກໍ່ເລີ່ມຈາກບໍລິເວັນ ທັງພາຍໃນ ແລະ ພາຍນອກ ສໍານັກງານເຊັ່ນກັນ.





ຕາງໜ້າຄະນະຮັບຜິດຊອບຈັດຕັ້ງປະຕິບັດການສີດຢາຂ້າເຊື້ອຕ້ານໂຄວິດ-19 ແລະ ຢາຂ້າຍຸງ ໃຫ້ຮູ້ວ່າ: ການປະຕິບັດການສີດຢາຂ້າເຊື້ອຕ້ານໂຄວິດ-19 ແລະ ຢາຂ້າຍຸງ ເທື່ອນີ້ ກໍ່ເພື່ອເປັນການສ້າງຂະບວນການຂໍານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ ຄືວັນທີ 7 ຕຸລາ 1968-7 ຕຸລາ 2021 ແລະ ເພື່ອເປັນການປະຕິບັດຕາມການຊີ້ນໍາຂອງຂັ້ນເທິງໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ໃນ ທຫລ ໃຫ້ຮັບປະກັນໄດ້ທັງປະລິມານ ແລະ ຄຸນນະພາບ.

# ພາບ-ຂ່າວ: ສົມອິກ ເຄນຄໍາແພງ









*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ*